**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສານປະຊາຊົນສູງສຸດ

ເລກທີ 06/ສປສສ

ນະຄອນຫຼວງວຽງຈັນ, ວັນທີ 29 ກັນຍາ 2016

# ຄຳແນະນຳ

## ຂອງປະທານສານປະຊາຊົນສູງສຸດ

**ເຖິງ:** ບັນດາ ຫົວໜ້າຄະນະສານ ຂອງສານປະຊາຊົນສູງສຸດ, ປະທານສານປະຊາຊົນທ້ອງຖິ່ນ ແລະ ສານທະຫານ ທຸກຂັ້ນ ໃນຂອບເຂດທົ່ວປະເທດ

**ເລື່ອງ:** ການນັບກຳນົດເວລາ ຂໍອຸທອນ, ຂໍລົບລ້າງ ຫຼື ການສະເໜີຄັດຄ້ານ.

**ອີງຕາມ** ກົດໝາຍວ່າດ້ວຍສານປະຊາຊົນ ສະບັບປັບປຸງ ປີ 2009;

**ອີງຕາມ** ມະຕິຕົກລົງ ສະບັບເລກທີ 37/ ຄປຈ, ລົງວັນທີ 6 ພຶດສະພາ 2011 ຂອງຄະນະປະຈຳສະພາແຫ່ງຊາດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານຂອງສານປະຊາຊົນສູງສຸດ;

**ອີງຕາມ** ມະຕິຕົກລົງຂອງກອງປະຊຸມສະພາຜູ້ພິພາກສາ ຄັ້ງວັນທີ 6 ກັນຍາ 2016.

ໃນໄລຍະຜ່ານມາສັງເກດເຫັນວ່າ ຄວາມເຂົ້າໃຈຂອງສານປະຊາຊົນ ແລະ ສານທະຫານ ກ່ຽວກັບການນັບກຳນົດເວລາຂໍອຸທອນ, ຂໍລົບລ້າງ ຫຼື ສະເໜີຄັດຄ້ານ ຍັງປະຕິບັດບໍ່ທັນເປັນເອກະພາບກັນ ແລະ ຍັງມີສານບາງແຫ່ງນັບທັງວັນພັກຕ່າງໆເຂົ້ານຳ, ແຕ່ສານບາງແຫ່ງແມ່ນຍົກເວັ້ນໃນກໍລະນີວັນສຸດທ້າຍຂອງກຳນົດເວລາດັ່ງກ່າວຫາກເປັນວັນພັກ. ສະນັ້ນ ເພື່ອໃຫ້ມີຄວາມເປັນເອກະພາບກັນ ພ້ອມທັງເປັນບ່ອນອີງໃຫ້ແກ່ສານ ໃນຂອບເຂດທົ່ວປະເທດ ໃນການຈັດຕັ້ງປະຕິບັດ.

**ປະທານສານປະຊາຊົນສູງສຸດ ອອກຄຳແນະນຳ ດັ່ງນີ້:**

1. ການນັບກຳນົດເວລາ ຊາວວັນ ຂອງການຂໍອຸທອນ ຫຼື ສະເໜີຄັດຄ້ານ ຄຳຕັດສິນ ແລະ ການນັບກຳນົດເວລາ ສີ່ສິບຫ້າວັນ ຂອງການຂໍລົບລ້າງ ຫຼື ການສະເໜີຄັດຄ້ານ ຄຳພິພາກສາ ຄະດີອາຍາ ແມ່ນໃຫ້ນັບວັນອ່ານ ຫຼື ວັນຮັບຊາບຄຳຕັດສິນ ຫຼື ຄຳພິພາກສາ ເປັນວັນທີໜຶ່ງ;

   ໃນກໍລະນີ ທີ່ມີການຈອງຂໍອຸທອນ, ຈອງຂໍລົບລ້າງ ຫຼື ຈອງສະເໜີຄັດຄ້ານ ຄຳຕັດສິນ, ຄຳພິພາກສາ ຄະດີອາຍານັ້ນ ການນັບກຳນົດເວລາ ຊາວວັນ ຂອງການຍື່ນຄຳຮ້ອງຂໍອຸທອນ ຫຼື ຄຳສະເໜີຄັດຄ້ານ ຄຳຕັດສິນ ແລະ

ການນັບກຳນົດເວລາ ສີ່ສິບຫ້າວັນ ຂອງການຍື່ນຄຳຮ້ອງຂໍລົບລ້າງ ຫຼື ຄຳສະເໜີຄັດຄ້ານ ຄຳພິພາກສາ ຄະດີອາຍາ ແມ່ນໃຫ້ນັບວັນຈອງຂໍອຸທອນ, ຈອງຂໍລົບລ້າງ ຫຼື ຈອງການສະເໜີຄັດຄ້ານ ເປັນວັນທີໜຶ່ງ;

2. ການນັບກຳນົດເວລາ ຊາວວັນ ຂອງການຂໍອຸທອນ ຫຼື ສະເໜີຄັດຄ້ານ ຄຳຕັດສິນ ແລະ ການນັບກຳນົດເວລາ ສາມສິບວັນ ຂອງການຂໍລົບລ້າງ ຫຼື ສະເໜີຄັດຄ້ານ ຄຳພິພາກສາ ຄະດີແພ່ງ ແມ່ນໃຫ້ນັບວັນລົງຄຳຕັດສິນ, ຄຳພິພາກສາ ຫຼື ວັນຮັບຊາບ ຄຳຕັດສິນ, ຄຳພິພາກສາ ເປັນວັນທີໜຶ່ງ;
3. ການນັບກຳນົດເວລາ ການຂໍອຸທອນ, ຂໍລົບລ້າງ ຫຼື ສະເໜີຄັດຄ້ານ ແລະ ການນັບເວລາການຈອງຂໍອຸທອນ, ຈອງຂໍລົບລ້າງ ຫຼື ຈອງສະເໜີຄັດຄ້ານ ຄຳຕັດສິນ, ຄຳພິພາກສາ ຄະດີອາຍາ ຫຼື ຄະດີແພ່ງ ນັ້ນ ແມ່ນໃຫ້ນັບວັນພັກທາງລັດຖະການ, ວັນບຸນປະເພນີ, ວັນສຳຄັນຕ່າງໆ ຂອງຊາດເຂົ້ານຳ, ຍົກເວັ້ນ ໃນກໍລະນີ ວັນສຸດທ້າຍຂອງກຳນົດເວລາດັ່ງກ່າວ ຫາກເປັນວັນພັກ ທາງລັດຖະການ, ວັນບຸນປະເພນີ, ວັນສຳຄັນຂອງຊາດ ແລະ ວັນທີ່ເກີດເຫດສຸດວິໄສຕ່າງໆ ທີ່ມີເຫດຜົນ ແມ່ນສາມາດອະນຸຍາດໃຫ້ຍື່ນຄຳຮ້ອງໄດ້ ໃນວັນຖັດມາ ທີ່ເປັນວັນລັດຖະການ ແລະ ໃນການນັບກຳນົດເວລານັ້ນ ແມ່ນໃຫ້ນັບຕາມວັນປະຕິທິນ.

ເມື່ອໄດ້ຮັບຄຳແນະນຳສະບັບນີ້ແລ້ວ ຈົ່ງນຳໄປເຜີຍແຜ່ໃຫ້ພະນັກງານທີ່ກ່ຽວຂ້ອງ ທີ່ຂຶ້ນກັບຄວາມຮັບຜິດຊອບຂອງຕົນ ເພື່ອພ້ອມກັນຈັດຕັ້ງປະຕິບັດ ຄຳແນະນຳ ສະບັບນີ້ຢ່າງເຂັ້ມງວດ.

ຄຳແນະນຳສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ປະທານສານປະຊາຊົນສູງສຸດ

ຄຳພັນ ສິດທິດຳພາ

ບ່ອນສົ່ງ:

- ຄະນະປະຈຳສະພາແຫ່ງຊາດ 1 ສະບັບ (ເພື່ອລາຍງານ)
- ຫ້ອງວ່າການໄອຍະການປະຊາຊົນສູງສຸດ 1 ສະບັບ (ເພື່ອຊາບ);
- ກະຊວງຍຸຕິທຳ 1 ສະບັບ(ເພື່ອຊາບ);
- ບັນດາສານປະຊາຊົນທ້ອງຖິ່ນ ບ່ອນລະ 1 ສະບັບ (ເພື່ອຊາບ ແລະ ປະຕິບັດ);
- ຄະນະສານ, ບັນດາກົມ, ຫ້ອງການ ແລະ ສະຖາບັນຄົ້ນຄວ້າ-ຝຶກອົບຮົມ ບ່ອນລະ 1 ສະບັບ (ເພື່ອປະຕິບັດ);
- ສຳເນົາໄວ້ 2 ສະບັບ.